ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສໍານັກງານ ນາຍົກລັດຖະມົນຕີ

ອົງການ ໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ

ເລກທີ 450 /ສນຍ.ອປທ

ລົງວັນທີ, 07 JUN 2010

# ຂໍ້ຕົກລົງ

## ຂອງລັດຖະມົນຕີ ປະຈໍາ ສນຍ, ຫົວໜ້າ ອົງການ ໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ ວ່າດ້ວຍ ການຫຼຸດອັດຕາ ຄ່ານໍາໃຊ້ ຄື້ນຄວາມຖີ່ວິທະຍຸ.

- ອີງຕາມ ດໍາລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 375/ນຍ ລົງວັນທີ 22 ຕຸລາ 2007 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ອົງການ ໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ.
- ອີງຕາມ ບົດບັນທຶກກອງປະຊຸມ ຄັ້ງວັນທີ 14/05/2010 ກ່ຽວກັບ ການເກັບຄ່າທໍານຽມ, ຄ່າບໍລິການ ແລະ ຄ່ານໍາໃຊ້ ຄື້ນຄວາມຖີ່ວິທະຍຸ ລະຫວ່າງ ອປທ ແຫ່ງຊາດ ກັບ ບັນດາ ບໍລິສັດບໍລິການ ໂທລະຄົມ ແລະ ອິນເຕີເນັດ.

ເພື່ອສ້າງເງື່ອນໄຂສະດວກ ໃຫ້ແກ່ ບັນດາບໍລິສັດບໍລິການ ໂທລະຄົມມະນາຄົມ ໃນການດໍາເນີນທຸລະກິດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນເພີ່ມຂຶ້ນ, ທັງເປັນການສ້າງລາຍຮັບ ເຂົ້າງົບປະມານ ແຫ່ງຊາດ ໃຫ້ໄດ້ຫຼາຍກວ່າເກົ່າ.

ລັດຖະມົນຕີ ປະຈໍາ ສນຍ, ຫົວໜ້າ ອົງການ
ໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ ອອກຂໍ້ຕົກລົງ:

ມາດຕາ 1: ເຫັນດີ ເກັບອັດຕາຄ່ານໍາໃຊ້ ຄື້ນຄວາມຖີ່ວິທະຍຸ ປະເພດຕ່າງໆ ດັ່ງນີ້:

- ອັດຕາຄ່ານໍາໃຊ້ ຄື້ນຄວາມຖີ່ວິທະຍຸ ລະບົບໂທລະສັບມືຖື GSM 900 ແລະ GSM 1800 .......................................................................... 120,000 ກີບ/KHz.
- ອັດຕາຄ່ານໍາໃຊ້ ຄື້ນຄວາມຖີ່ວິທະຍຸ ໂທລະສັບມືຖື ລະບົບອື່ນໆ.... 100,000ກີບ/KHz.
- ອັດຕາຄ່ານໍາໃຊ້ ຄື້ນຄວາມຖີ່ວິທະຍຸ ລະບົບສື່ສານຄວາມໄວສູງບໍ່ມີສາຍ (WiMAX ແລະ ລະບົບອື່ນໆທີ່ຄ້າຍຄືກັນ) ...................................................... 50,000 ກີບ/KHz.

ມາດຕາ 2: ມອບໃຫ້ ກົມ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ໄດ້ ນັບແຕ່ວັນທີ 1 ມັງກອນ 2010 ເປັນຕົ້ນໄປ, ບັນດາຂໍ້ຕົກລົງອື່ນໆ ທີ່ຄັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີ ປະຈຳ ສນຍ

ຫົວໜ້າ ອົງການ ໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ

ຄຳລວດ ສິດລາກອນ